ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

Basic Education Quality and Access in Lao PDR






## Building Safe Schools: Ministry of Education and Sports and Australia continue their partnership to strengthen Child Protection and Safeguarding in primary classrooms

## Media Report

**06 - 15 August 2025**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ ຕາງໜ້າໃຫ້ລັດຖະບານອົດສະຕຣາລີ
Basic Education Quality and Access in Lao PDR is managed by Tetra Tech International Development
on behalf of the Australian Government.

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2025-08-13 | Newspaper | Army | Page 6 |
| 2025-08-13 | Newspaper | Vientiane Times | Page 4 |
| 2025-08-13 | Newspaper | Public Security | Page 2 |
| 2025-08-13 | Newspaper | Vientiane Mai | Page 5 |
| 2025-08-14 | Newspaper | Pathedlao | Front and page 4 |
| 2025-08-06 | Social media | Luang Namtha Television Facebook | 55K Followers |
| 2025-08-11 | Social media | Lao Security News Facebook | 150K Followers |
| 2025-08-11 | Social media | Economic and Commerce Facebook | 653K Followers |
| 2025-08-11 | Social media | Vientiane Mai Facebook | 6K Followers |
| 2025-08-12 | Social media | Edu-Sport Daily News Facebook | 12K Followers |
| 2025-08-12 | Social media | Pathedlao Facebook | 390K Followers |
| 2025-08-13 | Social media | Information Media Centre Facebook | 11K Followers |
| 2025-08-15 | Social media | Army Radio FM 99.7 Facebook | 30K Followers |
| 2025-08-15 | Social media | Savannakhet Radio Facebook | 21K Followers |
| 2025-08-15 | Social media | Lao People's Army News Facebook | 144K Followers |
| 2025-08-15 | Social media | Lao National Radio FM 103.7 Facebook | 175K Followers |
| 2025-08-20 | Social media | Luang Namtha Teacher Training College Facebook | 979 Followers |
| 2025-08-12 | Website | KPL English | Read article in English here |
| 2025-08-14 | Website | BEQUAL | Read article in English here<br>Read article in Lao here |
| 2025-08-12 | Radio | Army Radio FM 99.7 | |
| 2025-08-12 | Radio | Public Security Radio FM 101.5 | |
| 2025-08-12 | Radio | Lao National Radio FM 103.7 | |
| 2025-08-12 | Radio | Vientiane Radio FM 105.5 | |
| 2025-08-16 | Radio | Education news FM 103.7 MHZ | |
| 2025-08-06 | TV | Luang Namtha TV | Watch TV news here |
| 2025-08-15 | WhatsApp | MT-PT WhatsApp and FB groups | 19 groups with trainers +/- 713 members |
| 2025-08-15 | WhatsApp | PESS-DESB | 18 Provincial groups<br>426 members |
| 2025-08-15 | WhatsApp | Pre-Service Writing team | 8 TTCs and 2 universities<br>73 members |
| 2025-08-15 | WhatsApp | Target DESB | Teacher Dev Units in 30 target districts<br>64 members |

| | | | |
|---|---|---|---|
| 2025-08-15 | WhatsApp | Target TTC | Key coordinators from the 3 target TTCs 17 members |
| 2025-08-15 | WhatsApp | IPS | in targeted provinces-LNT, XKH, SVK- 8 Districts in XKH, 12 Districts |
| 2025-08-15 | WhatsApp | Teaching Standard Review group | MT-PT- 28 members |

## Pictures of articles in the media

| | | | |
|---|---|---|---|
| **2025-08-13** | **Newspaper** | **Army** | **Page 6** |



### ສືບຕໍ່ຮ່ວມມືເພື່ອສ້າງຄວາມເຂັ້ມແຂງດ້ານການປົກປ້ອງ ແລະ ຮັກສາຄວາມປອດໄພສໍາລັບເດັກໃນຂັ້ນປະຖົມສຶກສາ

ໃນເດືອນກໍລະກົດ ແລະ ສິງຫາ 2025 ນີ້, ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໂດຍການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ, ໄດ້ຝຶກອົບຮົມຫົວຂໍ້ໃໝ່ກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສໍາລັບເດັກ ໃນ 3 ວິທະຍາໄລຄູ. ກິດຈະກໍານີ້ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຢ່າງຕໍ່ເນື່ອງຂອງກະຊວງສຶກສາທິການ ແລະ ກິລາ ແລະ ລັດຖະບານອົດສະຕຣາລີ ໃນການຮັບປະກັນຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນທຸກຄົນໃນລະບົບການສຶກສາ. ເປົ້າໝາຍແມ່ນແນໃສ່ຝຶກອົບຮົມໃຫ້ແກ່ນັກສຶກສາຕໍ່ເນື່ອງມາກຝຶກແລ້ວຈໍານວນ 737 ຄົນ ທີ່ກໍາລັງຮຽນໃນວິທະຍາໄລຄູຄັງໄຂ, ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນໍ້າທາ.

ທ່ານ ນາງ ອິງເຟືອນ ໄອໃສ, ຫົວໜ້າກົມສ້າງຄູ ໄດ້ໃຫ້ຄໍາເຫັນວ່າ: "ຄູມີບົດບາດສໍາຄັນໃນການປົກປ້ອງເດັກ ໂດຍການເປັນຜູ້ນໍາ, ໃຫ້ການສະໜັບສະໜູນ ແລະ ເຂົ້າໃຈພາລະບົດບາດຂອງຕົນ. ສະພາບແວດລ້ອມການຮຽນຮູ້ທີ່ພວກເຮົາສ້າງຂຶ້ນ ມີຜົນກະທົບໂດຍກົງຕໍ່ຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນ. ເມື່ອເດັກຮູ້ສຶກປອດໄພ, ພວກເຂົາຈະມີໂອກາດສໍາເລັດຫຼາຍຂຶ້ນໃນການຮຽນ."

ທ່ານ ນາງ ວາເນັດຊາ ເວັກກາທີ, ເລຂາເອກ, ສະຖານທູດອົດສະຕຣາລີ ປະຈໍາ ສປປ ລາວ ໄດ້ເນັ້ນໜັກກ່ຽວກັບການຮ່ວມມືຢ່າງຕໍ່ເນື່ອງວ່າ: "ເມື່ອເຮັດວຽກກັບເດັກນ້ອຍ, ພວກເຮົາມີພາລະບົດບາດຮ່ວມກັນໃນການປົກປ້ອງສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າ. ພວກເຮົາພູມໃຈທີ່ໄດ້ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານແຜນງານບີຄວາ ເພື່ອສະໜັບສະໜູນການພັດທະນາ 'ເອກະສານແນະນໍາ ການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກສໍາລັບ' ຢ່າງເປັນທາງການ, ພ້ອມທັງເຝິກອົບຮົມຄູໃນຫົວຂໍ້ສໍາຄັນນີ້." ການເຝິກອົບຮົມໃນປີ 2025 ນີ້ ໄດ້ຮັບການນໍາພາໂດຍທີມຄູເຝິກ 17 ທ່ານ ຈາກທີມສະເພາະກິດດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ ຂອງ 3 ວິທະຍາໄລຄູ. ນອກຈາກການເພີ່ມສ້າງຄວາມຮັບຮູ້ໃຫ້ແກ່ນັກຮຽນຕໍ່ເນື່ອງມາກຝຶກແລ້ວ, ການເຝິກອົບຮົມນີ້ຍັງເປັນໂອກາດອັນດີໃນການທົດລອງໃຊ້ "ຄູ່ມືເຝິກອົບຮົມການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກ" ແລະ ສ້າງທັກສະການເຝິກອົບຮົມຂອງທີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ.

ກອງປະຊຸມສໍາມະນາແບບມີສ່ວນຮ່ວມ 2 ວັນ ທີ່ຈັດຂຶ້ນໂດຍແຕ່ລະວິທະຍາໄລຄູ ໄດ້ນໍາໃຊ້ເກມ, ການສະແດງບົດບາດສົມມຸດ, ກໍລະນີສຶກສາ ແລະ ການສົນທະນາກຸ່ມ ເພື່ອສ້າງຄວາມຕື່ນເຕັ້ນໃຫ້ແກ່ຜູ້ເຂົ້າຮ່ວມ. ຜູ້ເຂົ້າຮ່ວມໄດ້ຄົ້ນຫາແນວຄວາມຄິດຫຼັກກ່ຽວກັບການປົກປ້ອງເດັກ ເຊັ່ນ: ການສື່ສານຢ່າງເຄົາລົບ, ການປະຕິບັດທີ່ປອດໄພ ແລະ ການຮຽນຮ່ວມຫ້ອງຮຽນ, ການໃຊ້ສື່ອີເລັກໂທຣນິກຢ່າງມີຄວາມຮັບຜິດຊອບ ແລະ ການຈໍາແນກ ແລະ ປ້ອງກັນການລ່ວງລະເມີດ, ການຂູດຮີດ, ແລະ ການລົບກວນ. ຫົວຂໍ້ທີ່ລະອຽດອ່ອນ ເຊັ່ນ: ການໃຊ້ເຫຼົ້າ ແລະ ສານເສບຕິດ, ການຖ່າຍວິດີໂອ ແລະ ຮູບພາບເດັກ ແລະ ຄວາມຮັບຮູ້ກ່ຽວກັບທີ່ສົ່ງເສີມການຮຽນຮ່ວມ ໄດ້ຖືກນໍາສະເໜີໃນລັກສະນະທີ່ເຄົາລົບວັດທະນະທໍາ.

ທ່ານ ນາງ ວາເນັດຊາ ເວັກກາທີ ກ່າວສະຫຼຸບໃນຕອນທ້າຍວ່າ: "ການປົກປ້ອງເດັກແມ່ນພັນທະຂອງທຸກຄົນ. ພວກເຮົາຫວັງວ່າ 'ເອກະສານແນະນໍາການປົກປ້ອງ ແລະ ຮັກສາຄວາມປອດໄພສໍາລັບເດັກ' ຈະຍັງເປັນແຫຼ່ງຂໍ້ມູນສໍາຄັນສໍາລັບຄູ ແລະ ນັກສຶກສາທຸກຄົນທີ່ເຮັດວຽກກັບເດັກ, ເພື່ອຊ່ວຍສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ ແລະ ສ້າງພື້ນທີ່ສໍາລັບເດັກທຸກຄົນ. ການຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ ແລະ ແຜນງານບີຄວາ ຂອງພວກເຮົາຈະສືບຕໍ່ສຸມໃສ່ການຮັບປະກັນວ່າຫຼັກການເຫຼົ່ານີ້ຈະຖືກບູລະນະໃສ່ໃນລະບົບການສຶກສາ."

| | | | |
|---|---|---|---|
| 2025-08-13 | Newspaper | Vientiane Times | Page 4 |



The Ministry of Education and Sports and Australia are continuing their partnership to strengthen child protection and safeguarding in primary schools, with over 700 teachers taking refresher courses at three teacher training colleges receiving training in July and August under the Australian government's BEQUAL programme.

| | | | |
|---|---|---|---|
| 2025-08-13 | Newspaper | Public Security | Page 2 |

# ແຜນງານບິຄອາ ຝຶກອົບຮົມການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ໃຫ້ 3 ວິທະຍາໄລຄູ

ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານບິຄອາໄດ້ຈັດການຝຶກອົບຮົມຫົວຂໍ້ໃໝ່ກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ໃນ 3 ວິທະຍາໄລຄູ ເພື່ອສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຢ່າງຕໍ່ເນື່ອງຂອງກະຊວງສຶກສາທິການ ແລະ ກິລາ ແລະ ລັດຖະບານອົດສະຕຣາລີ ໃນການຮັບປະກັນຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນທຸກຄົນໃນລະບົບການສຶກສາ.

ການຝຶກອົບຮົມຮອບໃໝ່ນີ້ ໄດ້ຈັດຂຶ້ນໃນເດືອນກໍລະກົດ ແລະ ສິງຫາ 2025, ເປົ້າໝາຍແມ່ນແນໃສ່ຝຶກອົບຮົມໃຫ້ແກ່ນັກສຶກສາຕໍ່ເນື່ອງພາກພັກແລ້ງຈຳນວນ 737 ຄົນ ທີ່ກຳລັງຮຽນໃນວິທະຍາໄລຄູຄັງໄຂ, ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນ້ຳທາ.

ເອກະສານທີ່ນຳມາຝຶກອົບຮົບແມ່ນຄູ່ມືການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກສຳລັບຄູ, ທີ່ໄດ້ຮັບການພັດທະນາໂດຍພະແນກຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ ຫ້ອງການກະຊວງສຶກສາທິການ ແລະ ກິລາ ແລະ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ.

ທ່ານ ນາງ ວົງເດືອນ ໄອໃສ ຫົວໜ້າກົມສ້າງຄູ ໄດ້ໃຫ້ຄຳເຫັນວ່າ: ຄູມີບົດບາດສຳຄັນໃນການປົກປ້ອງເດັກ ໂດຍການເປັນຜູ້ນຳ, ໃຫ້ການສະໜັບສະໜູນ ແລະ ເຂົ້າໃຈພາລະບົດບາດຂອງຕົນ. ສະພາບແວດລ້ອມການຮຽນຮູ້ທີ່ພວກເຂົາສ້າງຂຶ້ນມີຜົນກະທົບໂດຍກົງຕໍ່ຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນ. ເມື່ອເດັກຮູ້ສຶກປອດໄພ, ພວກເຂົາຈະມີໂອກາດສຳເລັດຫຼາຍຂຶ້ນໃນການຮຽນ.

ທ່ານ ນາງ ອາເນັດຊາ ເຮັກກາທີ ເລຂາເອກສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ໄດ້ເນັ້ນໜັກກ່ຽວກັບການຮ່ວມມືຢ່າງຕໍ່ເນື່ອງ ວ່າ: ເມື່ອເຮັດວຽກກັບເດັກນ້ອຍ, ພວກເຮົາມີພາລະບົດບາດຮ່ວມກັນໃນການປົກປ້ອງສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າ. ພວກເຮົາພູມໃຈທີ່ໄດ້ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານແຜນງານບິຄອາ ເພື່ອສະໜັບສະໜູນການພັດທະນາເອກະສານແນະນຳການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກສຳລັບ ຢ່າງເປັນທາງການ, ພ້ອມທັງຝຶກອົບຮົມຄູໃນຫົວຂໍ້ສຳຄັນນີ້.



ການຝຶກອົບຮົມໃນປີ 2025 ໄດ້ຮັບການນຳພາໂດຍທີມຄູຝຶກ 17 ທ່ານ ຈາກທີມສະເພາະກິດດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຂອງ 3 ວິທະຍາໄລຄູ. ໂດຍແຕ່ລະວິທະຍາໄລຄູ ໄດ້ນຳໃຊ້ເກມ, ການສະແດງບົດບາດສົມມຸດ, ກໍລະນີສຶກສາ ແລະ ການສົນທະນາກຸ່ມ ເພື່ອສ້າງຄວາມຕື່ນເຕັ້ນໃຫ້ແກ່ຜູ້ເຂົ້າຮ່ວມ. ຜູ້ເຂົ້າຮ່ວມໄດ້ຄົ້ນຫາແນວຄວາມຄິດຫຼັກກ່ຽວກັບການປົກປ້ອງເດັກ ເຊັ່ນ: ການສື່ສານຢ່າງເຄົາລົບ, ການປະຕິບັດທີ່ປອດໄພ ແລະ ການຮຽນຮ່ວມຫ້ອງຮຽນ, ການໃຊ້ສື່ເອເລັກໂຕຣນິກຢ່າງມີຄວາມຮັບຜິດຊອບ ແລະ ການຈຳແນກ ແລະ ປ້ອງກັນການລ່ວງລະເມີດ, ການຂູດຮີດ, ແລະ ການລົບກວນ. ຫົວຂໍ້ທີ່ລະອຽດອ່ອນ ເຊັ່ນ: ການໃຊ້ເຫຼົ້າ ແລະ ສານເສບຕິດ, ການຖ່າຍວິດີໂອ ແລະ ຮູບພາບເດັກ ແລະ ຄວາມຮັບຮູ້ກ່ຽວກັບທີ່ສົ່ງເສີມການຮຽນຮ່ວມ ໄດ້ຖືກນຳສະເໜີໃນລັກສະນະທີ່ເຄົາລົບວັດທະນະທຳ.

2025-08-13 | Newspaper | Vientiane Mai | Page 5

# ຍົກສູງຄວາມສາມາດດ້ານການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກ




ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ຈັດຝຶກອົບຮົມຫົວຂໍ້ໃໝ່ "ກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳ ລັບເດັກ ໃນ 3 ວິທະຍາໄລຄູ ຂຶ້ນໃນເດືອນກໍລະກົດ-ສິງຫາ 2025 ເພື່ອແນໃສ່ຝຶກອົບຮົມໃຫ້ນັກສຶກສາຕໍ່ເນື່ອງ ພາກພັກແລ້ງ 737 ຄົນ ທີ່ກຳລັງຮຽນໃນວິທະຍາໄລຄູຄັງໄຂ ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນ້ຳທາ ເຊິ່ງແມ່ນຄູສອນຊັ້ນປະຖົມສຶກສາທີ່ເຂົ້າຮ່ວມຫຼັກສູດ ເພື່ອຍົກລະດັບວິຊາຊີບຂອງເຂົາເຈົ້າແນໃສ່ນຳເອົາຄວາມຮູ້ ແລະ ທັກສະໃໝ່ໆ ໄປໃຊ້ຢູ່ໂຮງຮຽນຂອງຕົນ ໃຫ້ດີຂຶ້ນ.

ບົນພື້ນຖານຄວາມສຳເລັດຈາກການສ້າງເອກະສານ ກໍຄືຄູ່ມືການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກສຳລັບຄູ ທີ່ໄດ້ຮັບການພັດທະນາໂດຍພະແນກຄວາມກ້າວໜ້າແມ່ຍິງ ແມ່ ແລະ ເດັກ ຫ້ອງການກະຊວງ ສສກ ເອກະສານແນະນຳນີ້ ໄດ້ແຈກຢາຍຢ່າງກວ້າງຂວາງ ແລະ ເປັນເຄື່ອງມືສຳຄັນໃນການຊ່ວຍຄູສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ.

ທ່ານນາງ ວົງເດືອນ ໂອໃສ ຫົວໜ້າກົມສ້າງຄູ ກ່າວວ່າ: ຄູ ມີບົດບາດສຳຄັນໃນການປົກປ້ອງເດັກ ໂດຍການເປັນຜູ້ນຳໃຫ້ການສະໜັບສະໜູນ ແລະ ເຂົ້າໃຈພາລະບົດບາດຂອງຕົນ ສະພາບແວດລ້ອມການຮຽນຮູ້ທີ່ພວກເຂົາສ້າງຂຶ້ນ ມີຜົນກະທົບໂດຍກົງຕໍ່ຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນ ເມື່ອເດັກຮູ້ສຶກປອດໄພ ພວກເຂົາຈະມີໂອກາດສຳເລັດຫຼາຍຂຶ້ນໃນການຮຽນ ການຝຶກອົບຮົມນີ້ ຊ່ວຍໃຫ້ຄູເຂົ້າໃຈຢ່າງຊັດເຈນກ່ຽວກັບບົດບາດຂອງຕົນໃນການຮັບປະກັນຄວາມປອດໄພ ແລະ ໃຫ້ຂໍ້ມູນຈຳເປັນກ່ຽວກັບວິທີລາຍງານຂໍ້ກັງວົນ ແລະ ເຂົ້າເຖິງການຂໍຄວາມຊ່ວຍເຫຼືອ ນອກນີ້ ຍັງເປັນໂອກາດທີ່ດີໃນການທົດລອງໃຊ້ຄູ່ມືຄູຝຶກ ເພື່ອຈະນຳເອົາຄຳເຫັນທີ່ໄດ້ຮັບມາປັບປຸງເອກະສານຕາມຄວາມຈຳເປັນ ກ່ອນຈະຂະຫຍາຍການຝຶກອົບຮົມໃຫ້ກວ້າງຂວາງຕື່ມ.

ທ່ານນາງ ອາເນັດຊາ ເຮັກກາທີ ເລຂາເອກສະຖານທູດອົດສະຕຣາລີປະຈຳລາວ ກ່າວວ່າ: ເມື່ອເຮັດວຽກກັບເດັກນ້ອຍ ພວກເຮົາມີພາລະບົດບາດຮ່ວມກັນໃນການປົກປ້ອງສຸຂະພາບດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າ ພວກເຮົາພູມໃຈທີ່ໄດ້ຮ່ວມມືກັບກະຊວງ ສສກ ໂດຍຜ່ານແຜນງານບີຄວາ ເພື່ອສະໜັບສະໜູນການພັດທະນາເອກະສານແນະນຳ ການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກ ສຳລັບພ້ອມທັງຝຶກອົບຮົມຄູໃນຫົວຂໍ້ສຳຄັນນີ້.

ການຝຶກອົບຮົມຄັ້ງນີ້ ໄດ້ຮັບການນຳພາໂດຍທີມຄູຝຶກ 17 ທ່ານ ຈາກທີມສະເພາະກິດດ້ານຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ການສຶກສາຮຽນຮ່ວມຂອງ 3 ວິທະຍາໄລຄູ ນອກຈາກການຍົກສູງຄວາມຮັບຮູ້ໃຫ້ນັກຮຽນຕໍ່ເນື່ອງພາກພັກແລ້ງ ການຝຶກອົບຮົມນີ້ຍັງເປັນໂອກາດອັນດີໃນການທົດລອງໃຊ້ຄູ່ມືຝຶກອົບຮົມການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກ ແລະ ສ້າງທັກສະການຝຶກອົບຮົມຂອງທີມຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ ເຊິ່ງເນັ້ນໜັກຄວາມສຳຄັນຂອງການສອນ ໃຫ້ເດັກຮູ້ຈັກຄວາມປອດໄພໃນທຸກຫ້ອງຮຽນ ແລະ ຮັບປະກັນວ່າຄູທຸກຄົນບໍ່ວ່າຈະເປັນຄູໃໝ່ ຫຼື ມີປະສົບການ ຈະມີຄວາມພ້ອມໃນການສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ ແລະ ເຄົາລົບກັນ.

| 2025-08-14 | Newspaper | Pathedlao | Front and page 4 |
|---|---|---|---|

# ສ້າງຄວາມເຂັ້ມແຂງການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກໃນຂັ້ນປະຖົມສຶກສາ

ຂປລ. ກະຊວງສຶກສາທິການ ແລະ ກິລາ ໄດ້ສະໜັບສະໜູນຈາກ ລັດຖະບານອົດສະຕາລີ ໂດຍຜ່ານ ແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ) ຈັດຝຶກອົບຮົມ ກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກໃນຂັ້ນປະຖົມສຶກສາເມື່ອບໍ່ດົນມານີ້ ໃຫ້ຄູສອນຊັ້ນປະຖົມສຶກສາ 737 ຄົນ ທີ່ມາຈາກວິທະຍາໄລຄູຄັງໄຂ, ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນໍ້າທາ.

ທ່ານ ນາງ ອົ່ງເຄືອນ ໄຊໃສ ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ: ຄູມີບົດບາດສຳຄັນໃນການປົກປ້ອງເດັກ ໂດຍການເປັນຜູ້ນຳ, ໃຫ້ການສະໜັບສະໜູນ ແລະ ເຂົ້າໃຈພາລະບົດບາດຂອງເຂົາ, ເຊິ່ງສະພາບແວດລ້ອມການຮຽນຮູ້ທີ່ພວກເຂົາສ້າງຂຶ້ນມີອິດທິພົນໂດຍກົງຕໍ່ຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນ ເມື່ອເດັກຮູ້ສຶກປອດໄພ, ພວກເຂົາຈະມີໂອກາດສຳເລັດຫຼາຍຂຶ້ນໃນການຮຽນ. ການຝຶກອົບຮົມຄັ້ງນີ້ ຈະຊ່ວຍໃຫ້ຄູເຂົ້າໃຈຢ່າງຊັດເຈນກ່ຽວກັບບົດບາດຂອງຕົນໃນການຮັບປະກັນຄວາມປອດໄພ ແລະ ໃຫ້ຂໍ້ມູນຈຳເປັນກ່ຽວກັບວິທີລາຍງານຂໍ້ກັງວົນ ແລະ ເຂົ້າເຖິງການຊ່ວຍເຫຼືອ. ນອກຈາກນີ້, ຍັງເປັນໂອກາດທີ່ດີໃນການພັດທະນາຄູຝຶກ, ເຊິ່ງພວກເຂົາຈະນຳເອົາຄວາມຮູ້ທີ່ໄດ້

ອ່ານຕໍ່ໜ້າ 4



| 2025-08-06 | Luang Namtha TV Facebook and TV |
|---|---|




| 2025-08-11 | Lao Security News Facebook |
|---|---|



| 2025-08-11 | Economic and Commerce Facebook |
|---|---|

**ຂ່າວເສດຖະກິດ-ການຄ້າ Lao Economic Daily**
August 11 at 6:15 PM

ສືບຕໍ່ຮ່ວມມືເພື່ອສ້າງຄວາມເຂັ້ມແຂງດ້ານການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກໃນຂັ້ນປະຖົມສຶກສາ ກະຊວງສຶກສາທິການ ແລະ ກິລາ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານ... See more




You and 19 others · 7 shares

Like · Comment · Share

| 2025-08-11 | Vientiane Mai Facebook |
|---|---|

**ວຽງຈັນໃໝ່/VientianeMai**
August 11 at 3:23 PM

ຝຶກອົບຮົມດ້ານການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກ

..............................................

ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ຈັດຝຶກອົບຮົມຫົວຂໍ້ໃໝ່ກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ໃນ 3 ວິທະຍາໄລຄູ (ວຄ).

ການຝຶກອົບຮົມຄັ້ງນີ້ ຈັດຂຶ້ນໃນເດືອນກໍລະກົດ ຫາ ສິງຫາ 2025 ເປົ້າໝາຍແນໃສ່ຝຶກອົບຮົມໃຫ້ແກ່ນັກສຶກສາຕໍ່ເນື່ອງ ພາກພັກແລ້ງຈຳນວນ 737 ຄົນ ທີ່ກຳລັງຮຽນໃນວິທະຍາໄລຄູຄັງໄຂ ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນ້ຳທາ ນັກຮຽນທີ່ມາຮ່ວມນີ້ແມ່ນຄູສອນຊັ້ນປະຖົມສຶກສາທີ່ເຂົ້າຮ່ວມຫຼັກສູດເພື່ອຍົກລະດັບວິຊາຊີບຂອງເຂົາເຈົ້າ ເຂົາເຈົ້າຈະໄດ້ນຳເອົາຄວາມຮູ້ ແລະ ທັກສະໃໝ່ໆ ໄປໃຊ້ໃນໂຮງຮຽນຂອງຕົນ.

ບົນພື້ນຖານຄວາມສຳເລັດຈາກການສ້າງເອກະສານ ກໍຄືຄູ່ມືການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກສຳລັບຄູທີ່ໄດ້ຮັບການພັດທະນາໂດຍພະແນກຄວາມກ້າວໜ້າແມ່ຍິງ ແມ່ ແລະ ເດັກ ຫ້ອງການກະຊວງ ສສກ ເອກະສານແນະນຳນີ້ ໄດ້ຖືກແຈກຢາຍຢ່າງກວ້າງຂວາງ ແລະ ຍັງເປັນເຄື່ອງມືສຳຄັນໃນການຊ່ວຍຄູສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ.

ທ່ານ ນາງ ວົງເດືອນ ໂອໃສ ຫົວໜ້າກົມສ້າງຄູ ໄດ້ໃຫ້ຄຳເຫັນວ່າ: ຄູມີບົດບາດສຳຄັນໃນການປົກປ້ອງເດັກ ໂດຍການເປັນຜູ້ນຳ ໃຫ້ການສະໜັບສະໜູນ ແລະ ເຂົ້າໃຈພາລະບົດບາດຂອງຕົນ ສະພາບແວດລ້ອມການຮຽນຮູ້ທີ່ພວກເຂົາສ້າງຂຶ້ນ ມີຜົນກະທົບໂດຍກົງຕໍ່ຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນ ເມື່ອເດັກຮູ້ສຶກປອດໄພ ພວກເຂົາຈະມີໂອກາດສຳເລັດຫຼາຍຂຶ້ນໃນການຮຽນ ການຝຶກອົບຮົມນີ້ຊ່ວຍໃຫ້ຄູເຂົ້າໃຈຢ່າງຊັດເຈນກ່ຽວກັບບົດບາດຂອງຕົນໃນການຮັບປະກັນຄວາມປອດໄພ ແລະ ໃຫ້ຂໍ້ມູນຈຳເປັນກ່ຽວກັບວິທີລາຍງານຂໍ້ກັງວົນ ແລະ ເຂົ້າເຖິງການຂໍຄວາມຊ່ວຍເຫຼືອ ນອກນີ້ ຍັງເປັນໂອກາດທີ່ດີໃນການທົດລອງໃຊ້ຄູ່ມືຄູຝຶກ ເພື່ອຈະນຳເອົາຄຳເຫັນທີ່ໄດ້ຮັບມາປັບປຸງເອກະສານຕາມຄວາມຈຳເປັນກ່ອນຈະຂະຫຍາຍການຝຶກອົບຮົມໃຫ້ກວ້າງຂວາງຕື່ມ.

ທ່ານ ນາງ ວາເນັດຊາ ເຮັກກາທີ ເລຂາເອກ ສະຖານທູດອົດສະຕຣາລີ ປະຈຳລາວ ໄດ້ເນັ້ນໜັກກ່ຽວກັບການຮ່ວມມືຢ່າງຕໍ່ເນື່ອງວ່າ: ເມື່ອເຮັດວຽກກັບເດັກນ້ອຍ ພວກເຮົາມີພາລະບົດບາດຮ່ວມກັນໃນການປົກປ້ອງສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າ ພວກເຮົາພູມໃຈທີ່ໄດ້ຮ່ວມມືກັບກະຊວງ ສສກ ໂດຍຜ່ານແຜນງານບີຄວາ ເພື່ອສະໜັບສະໜູນການພັດທະນາ ເອກະສານແນະນຳ ການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກສຳລັບ ພ້ອມທັງຝຶກອົບຮົມຄູໃນຫົວຂໍ້ສຳຄັນນີ້.

ການຝຶກອົບຮົມຄັ້ງນີ້ ໄດ້ຮັບການນຳພາໂດຍທີມຄູຝຶກ 17 ທ່ານ ຈາກທີມສະເພາະກິດດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ ຂອງ 3 ວິທະຍາໄລຄູ ນອກຈາກການຍົກສູງຄວາມຮັບຮູ້ໃຫ້ແກ່ນັກຮຽນຕໍ່ເນື່ອງພາກພັກແລ້ງ ການຝຶກອົບຮົມນີ້ ຍັງເປັນໂອກາດອັນດີໃນການທົດລອງໃຊ້ ຄູ່ມືຝຶກອົບຮົມການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກ ແລະ ສ້າງທັກສະການຝຶກອົບຮົມຂອງທີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ ເຊິ່ງໄດ້ເນັ້ນໜັກຄວາມສຳຄັນຂອງການສອນໃຫ້ເດັກຮູ້ຈັກຄວາມປອດໄພໃນທຸກຫ້ອງຮຽນ ແລະ ຮັບປະກັນວ່າຄູທຸກຄົນບໍ່ວ່າຈະເປັນຄູໃໝ່ ຫຼື ມີປະສົບການ ຈະມີຄວາມພ້ອມໃນການສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ ແລະ ເຄົາລົບກັນ.

ທ່ານ ນາງ ວາເນັດຊາ ເຮັກກາທີ ກ່າວສະຫຼຸບໃນຕອນທ້າຍວ່າ: ການປົກປ້ອງເດັກແມ່ນພັນທະຂອງທຸກຄົນ ພວກເຮົາຫວັງວ່າ ເອກະສານແນະນຳການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ຈະຍັງເປັນແຫຼ່ງຂໍ້ມູນສຳຄັນສຳລັບຄູ ແລະ ນັກສຶກສາທຸກຄົນທີ່ເຮັດວຽກກັບເດັກ ເພື່ອຊ່ວຍສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ ແລະ ສ້າງພື້ນທີ່ສຳລັບເດັກທຸກຄົນ ການຮ່ວມມືກັບກະຊວງ ສສກ ແລະ ແຜນງານບີຄວາ ຂອງພວກເຮົາຈະສືບຕໍ່ສຸມໃສ່ການຮັບປະກັນວ່າ ຫຼັກການເຫຼົ່ານີ້ຈະຖືກບູລະນະໃສ່ໃນລະບົບການສຶກສາ.




You and 5 others · 1 share

Like · Comment · Share

| 2025-08-12 | Edu-Sport Daily News Facebook |
|---|---|

**ໜັງສືພິມສຶກສາ, ວິທະຍາສາດ ແລະ ກິລາ ອອນລາຍ**
August 12 at 11:33 AM ·

ສສກ-ລັດຖະບານອົດສະຕຣາລີ ສຳເລັດການຖ່າຍທຳວິດີໂອທຳອິດ ຂອງແຜນສ້າງວິດີໂອການສົ່ງເສີມການສຶກສາໃນທົ່ວປະເທດ
++++++++++++++++++++++++++

ກະຊວງສຶກສາທິການ ແລະ ກິລາ (ສສກ) ແລະ ລັດຖະບານອົດສະຕຣາລີ ສຳເລັດການຖ່າຍທຳວິດີໂອທຳອິດ ຂອງແຜນສ້າງວິດີໂອການສົ່ງເສີມການສຶກສາໃນທົ່ວປະເທດ ເມື່ອບໍ່ດົນມານີ້ ທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ສະຖານທີ່ທີ່ກ່ຽວຂ້ອງ ໃຫ້ກຽດນຳພາການລົງຖ່າຍທຳໃນຄັ້ງນີ້ ໂດຍທ່ານ ນາງ ຄໍຣິນ ຈາວາລີ ຫົວໜ້າຝ່າຍສື່ສານ ແລະ ຜະລິດວິດີໂອ ແຜນງານບີຄວາ ແລະ ທ່ານ ອຸດົມ ສິງດາລາ ຮອງຜູ້ອຳນວຍການສູນໂຄສະນາຂ່າວສານ ການສຶກສາ ແລະ ກິລາ ພ້ອມດ້ວຍຜູ້ຕາງໜ້າຈາກສະຖານທູດອົດສະຕຣາລີ ປະຈຳລາວ, ທີມງານຖ່າຍທຳຈາກສູນໂຄສະນາຂ່າວສານການສຶກສາ ແລະ ກິລາ, ທີມງານຈາກແຜນການບີຄວາ, ບັນດານັກສະແດງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ການຖ່າຍທຳວິດີໂອສົ່ງເສີມການສຶກສາ ແມ່ນເລີ່ມຕອນທຳອິດດ້ວຍເລື່ອງລາວທີ່ເປັນແຮງບັນດານໃຈໃຫ້ນັກຮຽນ, ພໍ່ຜູ້ປົກຄອງ ແລະ ຊຸມຊົນ ເຫັນໄດ້ເຖິງຄຸນຄ່າ ແລະ ຊ່ວຍກັນສະໜັບສະໜູນການສຶກສາ ໄດ້ເລີ່ມການຖ່າຍທຳບົດເລື່ອງທຳອິດຂອງແຜນໂຄສະນາການສຶກສາແຫ່ງຊາດຄັ້ງໃໝ່ ເພື່ອສົ່ງເສີມການສຶກສາໃນທົ່ວປະເທດລາວ, ໃນບົດເລື່ອງທຳອິດມີຊື່ວ່າ: "ສອງເສັ້ນທາງ", ເປັນເລື່ອງລາວທີ່ປະທັບໃຈ ແລະ ເປັນເລື່ອງທຳອິດໃນບັນດາວິດີໂອທີ່ຈະຜະລິດ ເພື່ອສ້າງແຮງບັນດານໃຈໃຫ້ຮັກການຮຽນ ແລະ ຊຸກຍູ້ໃຫ້ໃນຮັກສືບຕໍ່ການຮຽນ.

ການຖ່າຍທຳບົດເລື່ອງທຳອິດແມ່ນດຳເນີນການຖ່າຍທຳໂດຍສູນໂຄສະນາຂ່າວສານການສຶກສາ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກະຊວງສຶກສາທິການ ແລະ ກິລາ ດ້ວຍຄວາມມຸ້ງໝັ້ນ ແລະ ເປັນມືອາຊີບ, ທີມງານມີຄວາມຕັ້ງໃຈ ແລະ ກະຕືລືລົ້ນທີ່ຈະນຳເອົາຂໍ້ຄວາມທີ່ສຳຄັນນີ້ຈັດຕັ້ງປະຕິບັດໂດຍອອກອາກາດຜ່ານວິດີໂອໃຫ້ໄດ້ຮັບຊົມໃນທົ່ວປະເທດ. ດັ່ງນັ້ນ, ເພື່ອເພີ່ມສຽງທີ່ເປັນເອກະລັກ ແລະ ເປັນແຮງບັນດານໃຈໃຫ້ກັບບົດເລື່ອງ, ທ່ານ ນາງ ປ່າເຢັ້ງຊາ ລໍ ນາງງາມຊົນເຜົ່າມົ້ງ ຄົນທຳອິດທີ່ໄດ້ເປັນຕົວແທນປະເທດລາວໃນການປະກວດ "Miss Universe" ແລະ ເປັນຜູ້ທີ່ຊ່ວຍໂຄສະນາກ່ຽວກັບການສຶກສາທີ່ມີຊື່ສຽງໂດ່ງດັງ, ໄດ້ອາສາເປັນຜູ້ບັນຍາຍໃນບົດເລື່ອງ "ສອງເສັ້ນທາງ" ເພື່ອປະກອບສ່ວນໃນການສ້າງບົດເລື່ອງນີ້ ແລະ ເພີ່ມຄວາມເປັນທຳມະຊາດ ແລະ ຄວາມອົບອຸ່ນໃຫ້ບົດເລື່ອງອີກດ້ວຍ.

ການຖ່າຍທຳ ແມ່ນໄດ້ລົງຖ່າຍທຳເປັນເວລາ 3 ວັນ ແຕ່ວັນທີ 5-7 ສິງຫາ 2025 ໂດຍໄດ້ເລີ່ມຖ່າຍທຳທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ໂຮງຮຽນ, ຮ້ານຄ້າ ແລະ ສະຖານທີ່ຕ່າງໆທີ່ກ່ຽວຂ້ອງໃນນະຄອນຫຼວງວຽງຈັນ. ຊຶ່ງບົດເລື່ອງ "ສອງເສັ້ນທາງ" ແລະ ເລື່ອງອື່ນໆຈະໄດ້ອອກອາກາດໃຫ້ຜູ້ຊົມໃນທົ່ວປະເທດລາວໄດ້ຮັບຊົມໄວໆນີ້, ເພື່ອເປັນການສ້າງຄວາມຫວັງ, ຄວາມພາກພູມໃຈ ແລະ ຄວາມເຊື່ອໝັ້ນຕໍ່ການສຶກສາ, ໂດຍວິດີໂອສົ່ງເສີມການສຶກສາຈະໄດ້ອອກອາກາດທາງໂທລະພາບແຫ່ງຊາດລາວ, ສື່ສັງຄົມອອນລາຍ ແລະ ນຳໃຊ້ໃນການໂຄສະນາການສຶກສາໃນຂັ້ນທ້ອງຖິ່ນໂດຍສະມາຊິກສະພາແຫ່ງຊາດ, ວິດີໂອຍັງຈະຖືກເຜີຍແຜ່ໃຫ້ຄູ, ທີ່ຜູ້ເຮັດວຽກສຶກສານິເທດ ແລະ ຜູ້ເຮັດວຽກໃນຂະແໜງການສຶກສາ ເພື່ອສະໜັບສະໜູນການໂຄສະນາການສຶກສາ ໂດຍສະເພາະຢູ່ໃນໂຮງຮຽນ ແລະ ໝູ່ບ້ານ.

ຂ່າວໂດຍ: ບົວລະພາ




You and 10 others 2 shares

Like Comment Share

| 2025-08-12 | Pathedlao Facebook |
|---|---|

**ປະເທດລາວ Pathedlao**
August 12 at 1:47 PM ·

ສ້າງຄວາມເຂັ້ມແຂງການປົກປ້ອງ ແລະ ຮັກສາຄວາມປອດໄພ
ສຳລັບເດັກໃນຂັ້ນປະຖົມສຶກສາ

ຂປລ. ກະຊວງສຶກສາທິການ ແລະ ກິລາ ໄດ້ສະໜັບສະໜູນຈາກລັດຖະບານອົດສະຕາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ຈັດຝຶກອົບຮົມກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ໃນຂັ້ນປະຖົມສຶກສາ ເມື່ອບໍ່ດົນມານີ້ ໃຫ້ຄູສອນຊັ້ນປະຖົມສຶກສາ 737 ຄົນ ທີ່ມາຈາກວິທະຍາໄລຄູຄັງໄຂ, ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫລວງນ້ຳທາ.
ທ່ານ ນາງ ວົງເດືອນ ໂອໃສ ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ: ຄູມີບົດບາດສຳຄັນໃນການປົກປ້ອງເດັກ ໂດຍການເປັນຜູ້ນຳ, ໃຫ້ການສະໜັບສະໜູນ ແລະ ເຂົ້າໃຈພາລະບົດບາດຂອງຕົນ, ເຊິ່ງສະພາບແວດລ້ອມການຮຽນຮູ້ທີ່ພວກເຂົາສ້າງຂຶ້ນ ມີຜົນກະທົບໂດຍກົງຕໍ່ຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນ ເມື່ອເດັກຮູ້ສຶກປອດໄພ, ພວກເຂົາຈະມີໂອກາດສຳເລັດຫລາຍຂຶ້ນໃນການຮຽນ. ການຝຶກອົບຮົມຄັ້ງນີ້ ຈະຊ່ວຍໃຫ້ຄູເຂົ້າໃຈຢ່າງຊັດເຈນ ກ່ຽວກັບບົດບາດຂອງຕົນໃນການຮັບປະກັນຄວາມປອດໄພ ແລະ ໃຫ້ຂໍ້ມູນຈຳເປັນ ກ່ຽວກັບວິທີລາຍງານຂໍ້ກັງວົນ ແລະ ເຂົ້າເຖິງການຂໍຄວາມຊ່ວຍເຫລືອ. ນອກຈາກນີ້, ຍັງເປັນໂອກາດທີ່ດີໃນການທົດລອງໃຊ້ຄູ່ມືຄູຝຶກ, ເຊິ່ງພວກເຮົາຈະນຳເອົາຄຳເຫັນທີ່ໄດ້ຮັບ ມາປັບປຸງເອກະສານຕາມຄວາມຈຳເປັນກ່ອນ ຈະຂະຫຍາຍການຝຶກອົບຮົມໃຫ້ກວ້າງຂວາງຕື່ມ.
ໂອກາດດຽວກັນ, ທ່ານ ນາງ ວາເນັດຊາ ເຮັກກາທີ ເລຂາເອກ, ສະຖານທູດອົດສະຕາລີ ປະຈຳ ສປປ ລາວ ໄດ້ກ່າວວ່າ: ເມື່ອເຮັດວຽກກັບເດັກນ້ອຍ, ພວກເຮົາມີພາລະບົດບາດຮ່ວມກັນ ໃນການປົກປ້ອງສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າ, ເຊິ່ງພວກເຮົາພູມໃຈທີ່ໄດ້ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານແຜນງານບີຄວາ ເພື່ອສະໜັບສະໜູນການພັດທະນາ ເອກະສານແນະນຳ ການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກຢ່າງເປັນທາງການ, ພ້ອມທັງຝຶກອົບຮົມຄູໃນຫົວຂໍ້ດັ່ງກ່າວ.
ໃນຂະນະທີ່, ຂະແໜງການສຶກສາຂອງ ສປປ ລາວ ຍັງຄົງພັດທະນາຢ່າງຕໍ່ເນື່ອງ, ຄວາມມຸ່ງໝັ້ນໃນການປົກປ້ອງ ແລະ ສະໜັບສະໜູນເດັກ ຍັງເປັນສິ່ງສຳຄັນທີ່ທຸກພາກສ່ວນຕ້ອງຮ່ວມມືກັນ. ການຝຶກອົບຮົມຄັ້ງນີ້, ໄດ້ເນັ້ນເຖິງຄວາມສຳຄັນຂອງການສອນ ໃຫ້ເດັກຮູ້ຈັກຄວາມປອດໄພໃນທຸກຫ້ອງຮຽນ ແລະ ຮັບປະກັນວ່າຄູທຸກຄົນ, ບໍ່ວ່າຈະເປັນຄູໃໝ່ ຫລື ມີປະສົບການ, ຈະມີຄວາມພ້ອມໃນການສ້າງສະພາບແວດລ້ອມ ໃນການຮຽນຮູ້ທີ່ປອດໄພ ແລະ ເຄົາລົບເຊິ່ງກັນ ແລະ ກັນ.



You and 6 others

Like Comment Share

| 2025-08-13 | Information Media Cerntre Facebook |
|---|---|

ສູນໂຄສະນາຂ່າວສານ ການສຶກສາ ແລະ ກິລາ
August 13 at 5:51 AM



ຫັ້ງສືພິມສຶກສາ, ວິທະຍາສາດ ແລະ ກິລາ ອອນລາຍ
August 11 at 2:33 PM

ສສກ-ລັດຖະບານອົດສະຕຣາລີ ສືບຕໍ່ຮ່ວມມືສ້າງຄວາມເຂັ້ມແຂງດ້ານການປົກປ້ອງ ແລະ ຮັກສາຄວາມປອດໄພ ສຳລັບເດັກໃນຂັ້ນປະຖົມສຶກສາ
++++++++++++++++++++++... See more

You and 2 others

Like Comment Share

| 2025-08-15 | Army Radio FM 99.7 Facebook |
|---|---|

ວິທະຍຸກະຈາຍສຽງກອງທັບປະຊາຊົນລາວ FM 99,7 MHz
August 15 at 10:41 AM

ສ້າງຄວາມເຂັ້ມແຂງດ້ານການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກໃນຊັ້ນປະຖົມສຶກສາ.
*******************************************

ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ, ຈັດຝຶກອົບຮົມຫົວຂໍ້ໃໝ່ກ່ຽວກັບການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ໃນ 3 ວິທະຍາໄລຄູ (ວຄ). ກິດຈະກຳດັ່ງກ່າວ, ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຢ່າງຕໍ່ເນື່ອງຂອງກະຊວງສຶກສາທິການ ແລະ ກິລາ ແລະ ລັດຖະບານອົດສະຕຣາລີ ໃນການຮັບປະກັນຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນທຸກຄົນໃນລະບົບການສຶກສາ.

ການຝຶກອົບຮົມຄັ້ງນີ້, ໄດ້ຈັດຂຶ້ນໃນເດືອນກໍລະກົດ ແລະ ສິງຫາ 2025, ຈຸດປະສົງເພື່ອ ແນໃສ່ຝຶກອົບຮົມໃຫ້ແກ່ນັກສຶກສາຕໍ່ເນື່ອງພາກພັກແລ້ງຈຳນວນ 737 ຄົນ ທີ່ກຳລັງຮຽນໃນວິທະຍາໄລຄູຄັງໄຂ, ວິທະຍາໄລຄູສະຫວັນນະເຂດ ແລະ ວິທະຍາໄລຄູຫຼວງນ້ຳທາ. ນັກຮຽນທີ່ມາຮ່ວມນີ້ແມ່ນຄູສອນຊັ້ນປະຖົມສຶກສາທີ່ເຂົ້າຮ່ວມຫຼັກສູດເພື່ອຍົກລະດັບວິຊາຊີບຂອງເຂົາເຈົ້າ. ເຂົາເຈົ້າຈະໄດ້ນຳເອົາຄວາມຮູ້ ແລະ ທັກສະໃໝ່ໆ ໄປໃຊ້ໃນໂຮງຮຽນຂອງຕົນ.

ບົນພື້ນຖານຄວາມສຳເລັດຈາກການສ້າງເອກະສານ ແລະ ເນັ້ນໜັກໃຫ້ເຫັນເຖິງຂໍ້ຄວາມໃນເອກະສານ "ຄູ່ມືການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກສຳລັບຄູ", ທີ່ໄດ້ຮັບການພັດທະນາໂດຍ ພະແນກຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ, ຫ້ອງການກະຊວງສຶກສາທິການ ແລະ ກິລາ ແລະ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ. ເອກະສານທີ່ນຳມາຝຶກອົບຮົມຄັ້ງນີ້ ເປັນເຄື່ອງມືສຳຄັນໃນການຊ່ວຍຄູສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ.

ທ່ານ ນາງ ວົງເດືອນ ໂອໃສ, ຫົວໜ້າກົມສ້າງຄູ ໃຫ້ຮູ້ວ່າ: "ຄູມີບົດບາດສຳຄັນໃນການປົກປ້ອງເດັກ ໂດຍການເປັນຜູ້ນຳ, ໃຫ້ການສະໜັບສະໜູນ ແລະ ເຂົ້າໃຈພາລະບົດບາດຂອງຕົນ. ສະພາບແວດລ້ອມການຮຽນຮູ້ທີ່ພວກເຂົາສ້າງຂຶ້ນ ມີຜົນກະທົບໂດຍກົງຕໍ່ຄວາມປອດໄພ ແລະ ສະຫວັດດີພາບຂອງນັກຮຽນ. ເມື່ອເດັກຮູ້ສຶກປອດໄພ, ພວກເຂົາຈະມີໂອກາດສຳເລັດຫຼາຍຂຶ້ນໃນການຮຽນ."

ທ່ານ ນາງ ວາເນັດຊາ ເຮັກກາທີ, ເລຂາເອກ, ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ໄດ້ເນັ້ນ ໜັກກ່ຽວກັບການຮ່ວມມືຢ່າງຕໍ່ເນື່ອງວ່າ: "ເມື່ອເຮັດວຽກກັບເດັກນ້ອຍ, ພວກເຮົາມີພາລະບົດບາດຮ່ວມກັນໃນການປົກປ້ອງສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າ. ພວກເຮົາພູມໃຈທີ່ໄດ້ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານແຜນງານບີຄວາ ເພື່ອສະໜັບສະໜູນການພັດທະນາ 'ເອກະສານແນະນຳ ການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກ'
www.rla.la



You, ວິທະຍຸກະຈາຍສຽງກອງທັບປະຊາຊົນລາວ FM 99,7 MHz and 6 others 1 share

Like Comment Share

| 2025-08-15 | Savannakhet Radio Facebook |
|---|---|




| 2025-08-15 | Lao People’s Army News Facebook |
|---|---|



